ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ໜອງຄົນຄູ, ເມືອງ ນາຊາຍທອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 030 9882809,ແຟັກ:(856-21)

ເລກທີ: 081 /ລອທ

ນະຄອນຫຼວງວຽງຈັນ, 16 JUN 2025

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 01 ປະຈຳປີ 2025

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ("ບໍລິສັດ" ຫຼື "ລອທ") ໄດ້ຈັດກອງປະຊຸມສະພາບໍລິຫານ ສະໄໝ ວິສາມັນ ຄັ້ງທີ 01 ປະຈຳປີ 2025 ຈັດຂຶ້ນໃນວັນທີ 16 ມິຖຸນາ 2025 ເວລາ 09:30 ໂມງ ຢູ່ທີ່ສຳນັກງານໃຫຍ່ ບໍລິສັດ ລາວອາໂກຣເທັກ ມະຫາຊົນ, ຖະໜົນ 13 ເໜືອ, ບ້ານໜອງຄົນຄູ, ເມືອງນາຊາຍທອງ, ນະຄອນຫຼວງວຽງ ຈັນ ໃຫ້ກຽດເປັນປະທານໂດຍ ທ່ານ ອະພິສິດ ຣຸຈິກຽດກຳຈອນ ປະທານສະພາບໍລິຫານ.

ລາຍຊື່ສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ

1.	ທ່ານ ອະພິສິດ	ຣຸຈິກຽດກຳຈອນ	ປະທານສະພາບໍລິຫານ
2.	ທ່ານ ນາງ ຄຳແພງ	ພັດທະດາວົງ	ຮອງປະທານສະພາບໍລິຫານ
3.	ທ່ານ ເສດ	ພັດທະນະມາດ	ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ
4.	ທ່ານ ພົງຖານ	ພິດຈຳນົງ	ສະມາຊິກສະພາບໍລິຫານ
5.	ທ່ານ ນາງ ດວງສະໄໝ	ເລົ່າຝົງ	ສະມາຊິກສະພາບໍລິຫານ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາ ບໍລິຫານ ສະໄໝວິສາມັນ ຄັ້ງທີ 01 ປະຈຳປີ 2025 ໂດຍມີລາຍລະອຽດດັ່ງລຸ່ມນີ້:

1. ມະຕິເຫັນດີຮັບຮອງແຜນການປັບປຸງແກ້ໄຂການຂາດທຶນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ປະຈຳປີ 2025.
2. ມະຕິເຫັນດີຮັບຮອງໃຫ້ ທ່ານ ເສດ ພັດທະນະມາດ ຊຶ່ງຜູ້ອຳນວຍການຂອງ ບໍລິສັດ ເປັນຜູ້ເຊັນແຜນການປັບປຸງ ແກ້ໄຂການຂາດທຶນ ແທນປະທານສະພາບໍລິຫານ.

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຮັບຊາບ

ດ້ວຍຄວາມນັບຖືເປັນຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ອະພິສິດ ຣຸຈິກຽດກຳຈອນ